# ການ ເດີນຂະບວນ ສາກົນ ຄັ້ງ ທີ່ ໔ ເພື່ອ ອິດສະຣະພາບ ຂອງ ຊົນເຜົ່ານ້ອຍ ແລະ ຊົນຊາດ ທີ່ ຖຸກ ກົດຂີ່

## ເບີລິນ, ປາຣີ, ໂຣມ

## ວັນເສົາ, ທີ່ ໒໘ ຕຸລາ ໒໐໑໑, ໑໔ໂມງ

ສະມອຄົມ *Societa Libera*, ທີ່ ບໍ່ ຂື້ນ ກັບ ພັກ ການເມືອງ ໃດ ໃດ, ທຳການ ເຄື່ອນໄຫວ ໂດຍ ສເມີມາ ເພື່ອ ປົກປ້ອງ ອິດສະຣະພາບ ໂດຍ ຍຶດຖື ວ່າ ອິດສະຣະພາບ ແມ່ນ ສິດທິ ຂອງ ແຕ່ລະ ບຸກຄົນ  ແລະ ສິດທິ ໃນການ ບໍຣິຫານ ຕົນ ເອງ ຂອງ ທຸກ ທຸກ ຊົນຊາດ.

- ໂດຍ ອີງໃສ່ ນະໂຍບາຍ ແລະ ແນວທາງ ແບບ ເສຣີພາບ, ແລະ ການ ນັບທື ສິດທິ ມະນຸດ ເປັນຫລັກ, ອົງການ *Societa Libera* ໃດ້ຈັດ ຫາໃ້ມີການ’ ***’ເດີນ ຂະບວນ ປະທ້ວງ ສາກົນ ເພື່ອ ອິດສະຣະພາບ*** ‘’  ທີ່ ກູງ ໂຣມ  ( Rome) ມາໃດ້ ໓ ປີ ແລ້ວ.   ຈຸດປະສົງ ຂອງ ການ ປະທ້ວງ ແບບ ‘’***ບໍ່ມີສຽງ***’’ ເຊັ່ນນີ້ ກໍ່ແມ່ນ ເພື່ອ ຊັກຊວນ ໃຫ້ ຊາວໂລກຊ່ວຍກັນ ປົກປ້ອງ ອິດສະຣະພາບ ຂອງ ປະຊາຊົນ (ເຊັ່ນ ພະມ້າ, ອີຣານ, ທີເບຕ, ອູຍກູຣ)  ແລະ ເປີດເຜີຍ ໃຫ້ ປະຊາຄົມ ສາກົນ ຮູ້ເຖີງ ການ ຕໍ່ສູ້ ເພື່ອ ອິດສະຣະພາບ ດັ່ງກ່າວ ຢູ່ທຸກ ມູມແຈໂລກ.

- ຕໍ່ຫນ້າການ ລ່ວງລະເມີດ ອັນຫນ້າ ວິຕົກ ກັງວົນ, ອົງການ *Societa Libera* ເຫັນວ່າ ຈະບໍ່ເປັນ ການພຽງພໍ ທີ່ ຈະມີການ ປະທ້ວງ ພຽງແຕ່ ກູ່ມໃດ ກູ່ມນຶ່ງ,  ແຕ່ ກົງກັນຂ້າມ, ມັນ ເຖີງ ແກ່ເວລາແລ້ວ, ທີ່ ຊາວ ຢູ່ໂຣບ ທົ່ວ ທະວີບ ຈະຕ້ອງ ຕື່ນຕົວ, ຮູ້ສືກ ແລະ ສຳນືກ ເຖີງ ຫນ້າທີ່ ຂອງຕົນ, ທີ່ຈະຕ້ອງ ຊ່ວຍເຫລືອ ເພື່ອນ ມະນຸດ ດ້ວຍກັນ ນັບເປັນ ຮ້ອຍລ້ານ ຄົນ.
ເຖີງ ແກ່ເວລາ ແລ້ວ, ທີ່ ສະຫະພາບ ຢູໂຣບ  ແລະ ອົງການ ຈັດຕັ້ງ ຕ່າງ  ຕ່າງ  ຈະຕ້ອງ ວ່າງ ມາດຕະການ ເພື່ອ ປົກປ້ອງ ກູ່ມ ຊົນ ເຜົ່ານ້ອຍ  ໂດຍ ບໍ່ລືມ ຊາວ ກຣິສຈຽນ.

- ເຖີງ ເວລາ ແລ້ວ ທີ່ ສະຫະພາບ ຢູ່ໂຣບ  ຈະຕ້ອງ ຈັດໃຫ້ມີ ‘ ***’ວັນ ຢູໂຣບ ເພື່ອ ອິດສະຣະພາບ ຂອງ ຊົນ ເຜົ່າ ນອ້ຍ ແລະ ຊົນຊາດ ຕີ່ ຖຸກ ກົດຂີ່ ບີບບີ້’’.***

- ໂດ້ຍ ເຫດຜົນ ດັ່ງກ່າວ, ອົງການ  *Societa Libera* ຈື່ງໃດ້ ຮຽກຮ້ອງ ຕໍ່ ຊາວ ຢູ່ໂຣບ, ຕໍ່ ປະຊາຄົມ ຊົນ ເຜົ່ານ້ອຍ  ແລະ ຊົນຊາດ ທີ່ ຖືກ ກົດຂີ່,  ແລະ ຕໍ່ ສື່ມວນຊົນ  ເພື່ອ ພັກດັນ ໃຫ້ ຂະບວນ ປະທ້ວງ ຄັ້ງ ຍິ່ງໃຫຍ່ ເກີດຂື້ນ ຢ່າງພ້ອມພຽງກັນ  ທີ່ ກູງ ເບີລິນ (Berlin), ປາຣີ (Paris) ແລະ ໂຣມ (Rome), ທັ້ງນີ້ ກໍ່ ເພື່ອ ສໍ່ສະແດງ ໃຫ້ ປະຊາຄົມ ສາກົນ ຮັບຊາບ ວ່າ  ການ ປົກປ້ອງ ສິດທິ ມະນຸດ ແມ່ນ ຫນ້າທີ່ ອັນ ຮີບດ່ວນ ແລະ ຈະຕ້ອງ ຖືກ ແກ້ໄຂ ກ່ອນ ອັນອື່ນຫມົດ.